# Course: Small Business Management

## Chapter 1:
Overview of Small Business **(continues)**

Lecturer: Stamy OUNPHOUVONG
Stamy@su.edu.la
Souphanouvong University, Lao PDR

# ວິຊາ: ການບໍລິຫານທຸລະກິດຂະໜາດນ້ອຍ
## Small Business Management

# ບົດທີ 1
## ສະພາບລວມຂອງທຸລະກິດຂະໜາດນອ້ຍ (ຕໍ່)
## Overview of Small Business **(continues)**

ສອນໂດຍ: ຊອ. ປທ. ສະຕາມີ ອຸ່ນພູວົງ

Stamy@su.edu.la

ມະຫາວິທະຍາໄລ ສຸພານຸວົງ

# ທົບທວນຄືນ (Review)

a) ທຸລະກິດຂະໜາດໜ້ອຍໝາຍເຖິງຫຍັງ?

b) ປະເພດຂອງທຸລະກິດຂະໜາດນ້ອຍໃນ ສປປ ລາວ, ມີຈັກປະເພດ?

c) ປະໂຫຍດຂອງທຸລະກິດຂະໜາດນ້ອຍປະກອບມີຫຍັງແດ່?

d) ອົງປະກອບຂອງຄວາມສຳເລັດຂອງທຸລະກິດຂະໜາດນ້ອຍ?

e) ຄວາມລົ້ມເຫລວຂອງທຸລະກິດຂະໜາດນ້ອຍຍ້ອນຫຍັງ?

# ບົດບາດຂອງທຸລະກິດຂະໜາດໜ້ອຍ ຕໍ່ເສດຖະກິດຂອງປະເທດ (ຕົວຢ່າງຈາກຕ່າງປະເທດ)

## ປະເທດ ສະຫະລັດອາເມຣິກາ (Rowinski, 2024)

- **ການສ້າງວຽກເຮັດງານທຳ:** ທຸລະກິດຂະໜາດນ້ອຍມີໜ້າທີ່ສ້າງວຽກໃໝ່ 62% ອີງຕາມການບໍລິຫານທຸລະກິດຂະໜາດນ້ອຍຂອງສະຫະລັດອາເມຣິກາ.
- **ການເຄື່ອນໄຫວເສດຖະກິດ:** ທຸລະກິດຂະໜາດນ້ອຍປະກອບສ່ວນ 44% ຂອງການເຄື່ອນໄຫວເສດຖະກິດຂອງສະຫະລັດອາເມຣິກາ.

# ບົດບາດຂອງທຸລະກິດຂະໜາດໜ້ອຍ ຕໍ່ເສດຖະກິດຂອງປະເທດ (ຕົວຢ່າງຈາກຕ່າງປະເທດ)

## ປະເທດ ໄທ (ອ້າງອີງຈາກ Oxford Business Group)

- **ການສ້າງວຽກເຮັດງານທຳ:** SMEs ເປັນນາຍຈ້າງທີ່ໃຫຍ່ທີ່ສຸດໃນປະເທດໄທ, ກວມເອົາເຖິງ 80.3% ຂອງການຈ້າງງານທັງໝົດ. SMEs ມີສ່ວນສຳຄັນຕໍ່ຜະລິດຕະພັນລວມຍອດຜະລິດຕະພັນພາຍໃນ (GDP) ຄາດຄະເນວ່າຈະກວມເອົາປະມານ 37.2 %.

# ບົດບາດຂອງທຸລະກິດຂະໜາດໜ້ອຍ ຕໍ່ເສດຖະກິດຂອງປະເທດ (ຕົວຢ່າງຈາກຕ່າງປະເທດ)

## ປະເທດຫວຽດນາມ

- **ການສ້າງວຽກເຮັດງານທຳ:** ຄືກັນກັບປະເທດໄທ, SMEs ແມ່ນຜູ້ສະໜອງວຽກໃຫຍ່ຢູ່ຫວຽດນາມ, ປະກອບສ່ວນສຳຄັນ 65% ຫາ 70% ຂອງຈຳນວນແຮງງານທັງໝົດ.
- **ການປະກອບສ່ວນຕໍ່ GDP:** ຄາດຄະເນວ່າຈະມີສ່ວນສຳຄັນໃນ GDP ປະມານ 40% ຫາ 45%
- **ນະວັດຕະກຳ ແລະ ວິສາຫະກິດ:** ລັກສະນະຂະຫຍັນຂັນເຄື່ອນຂອງ SMEs ຊຸກຍູ້ການປະດິດສ້າງຢູ່ຫວຽດນາມ. ປະກອບສ່ວນພັດທະນາຜະລິດຕະພັນໃໝ່ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງທ້ອງຖິ່ນ ສະເພາະຮັກສາພື້ນຖານເສດຖະກິດໃຫ້ເໝາະສົມ.

# ບົດບາດຂອງທຸລະກິດຂະໜາດໜ້ອຍ ຕໍ່ເສດຖະກິດຂອງປະເທດ (ຕົວຢ່າງຈາກຕ່າງປະເທດ)

## ປະເທດສິງກະໂປ

- **ການສ້າງວຽກເຮັດງານທຳ:** SMEs ແມ່ນຜູ້ສະໜອງວຽກຫຼັກໃນສິງກະໂປ, ປະກອບສ່ວນປະມານ 60-70% ຂອງການຈ້າງງານທັງໝົດ.
- **ການປະກອບສ່ວນຕໍ່ GDP:** SMEs ແມ່ນສ່ວນຫນຶ່ງທີ່ສຳຄັນ GDP ຂອງສິງກະໂປ. ຄາດຄະເນວ່າປະມານ 50% ຂອງ GDP ຂອງສິງກະໂປ.
- **ນະວັດຕະກຳ ແລະ ການເປັນຜູ້ປະກອບການ:** SMEs ສິງກະໂປເປັນທີ່ຮູ້ຈັກສຳລັບນະວັດຕະກຳ ແລະ ການປັບຕົວ. ເຂົາເຈົ້າມີບົດບາດສຳຄັນໃນການພັດທະນາຜະລິດຕະພັນແລະການບໍລິການໃຫມ່, ຮັກສາເສດຖະກິດສາມາດແຂ່ງຂັນໃນລະດັບໂລກ.

# ຮູບແບບຂອງຄວາມເປັນເຈົ້າຂອງກຳມະສິດ
# Legal form of ownership



# ຄວາມຈຳເປັນ ແລະ ຈຸດພິເສດຂອງແຕ່ລະກິດຈະການທຸລະກິດ, ບາງປັດໃຈທີ່ຄວນພິຈາລະນາເຖິງການເລືອກເຟັ້ນເອົາຮູບແບບທຸລະກິດໃດໜຶ່ງ

1. ບັນຫາຂອງການສ້າງຕັ້ງກຳມະສິດ
2. ຍອດທຶນທີ່ຕ້ອງການໃນການປະກອບທຸລະກິດ
3. ຜົນກຳໄລທີ່ຈະແບ່ງປັນ

# ຄວາມຈຳເປັນ ແລະ ຈຸດພິເສດຂອງແຕ່ລະກິດຈະການທຸລະກິດ, ບາງປັດໃຈທີ່ຄວນພິຈາລະນາເຖິງການເລືອກເຟັ້ນເອົາຮູບແບບທຸລະກິດໃດໜຶ່ງ

4. ວິງຈອນຂອງທຸລະກິດ ແລະ ຄວາມຈຳເປັນໃນການສືບຕໍ່ທຸລະກິດ

5. ລະດັບຂອງພາລະໜີ້ສິນຂອງຜູ້ເປັນເຈົ້າຂອງທຸລະກິດ

6. ຂໍ້ຈຳກັດດ້ານກົດໝາຍຕໍ່ຮູບແບບກຳມະສິດ

7. ການເສຍພາສີ ແລະ ອາກອນ

## ຈຸດພິເສດຂອງທຸລະກິດຂະໜາດໜ້ອຍ

1) ບັນຫາຂອງການສ້າງຕັ້ງ
2) ເງິນທຶນທີ່ຕ້ອງການ
3) ຜົນກຳໄລ
4) ວົງຈອນຊີວິດຂອງທຸລະກິດ ແລະ ການສືບຕໍ່
5) ລະດັບຂອງພາລະໜີ້ສິນ
6) ຂໍ້ຈຳກັດດ້ານກົດໝາຍ
7) ການເສຍພາສີອາກອນ

## ຮູບແບບຂອງທຸລະກິດ

1) ເຈົ້າຂອງຜູ້ດຽວ
2) ບໍລິສັດຮຸ້ນສ່ວນ
3) ບໍລິສັດຈຳກັດ

# ເຈົ້າຂອງຜູ້ດຽວ (Sole proprietorship)

ແມ່ນບຸກຄົນຜູ້ດຽວຖືກຳມະສິດ, ຊຶ່ງມີທັ້ງຂໍ້ດີ ແລະ ຂໍ້ເສຍ ເມື່ອປຽບທຽບກັບຮູບແບບກຳມະສິດອື່ນໆ. ເປັນທຸລະກິດທີ່ເລີ່ມຕົ້ນໄດ້ງ່າຍ, ມີອຳນາດໃນການຄຸ້ມຄອງຢ່າງເຕັມທີ່.

# ຂໍ້ດີເຈົ້າຂອງຜູ້ດຽວ (Advantages of the sole proprietorship)

1) ຈັດຕັ້ງງ່າຍ
2) ເລີກກິດຈະການງ່າຍ
3) ໃຫ້ຄວາມພໍໃຈສູງ
4) ຜົນກຳລັງທຸກຢ່າງເປັນຂອງເຈົ້າຂອງ
5) ມີອິດສະຫຼະໃນການຕັດສິນໃຈ
6) ເຈົ້າຂອງເປັນຜູ້ເສຍພາສີບຸກຄົນ

# ຂໍ້ເສຍເຈົ້າຂອງຜູ້ດຽວ (Disadvantages of the sole proprietorship)

1) ຫຍຸ້ງຍາກໃນການເພີ່ມທຶນ
2) ອາຍຸການຂອງການດຳເນີນທຸລະກິດມີຈຳກັດ
3) ເຈົ້າຂອງທຸລະກິດມີພາລະໜີ້ສິນບໍ່ຈຳກັດ.

# ບໍລິສັດຮຸ້ນສ່ວນ (Partnership)

ແມ່ນບໍລິສັດທີ່ປະກອບດ້ວຍ **ສອງຄົນ ຫຼື ຫຼາຍກວ່າສອງຄົນຂຶ້ນໄປ.** ສາມາດຈັດຕັ້ງຂຶ້ນບົນພື້ນຖານຄວາມເຫັນດີ ເຫັນພ້ອມຈາກຂາຮຸ້ນສ່ວນນໍາກັນ.

ຜູ້ປະກອບການຫຼື ຜູ້ທີ່ຈະເປັນຂາຮຸ້ນຄວນປຶກສາກັບອົງກອນທີ່ປຶກສາທາງດ້ານກົດໝາຍໃດໜຶ່ງ, ເພື່ອເຮັດລະບຽບຂໍ້ບັງຄັບຂອງບໍລິສັດຮຸ້ນສ່ວນຂຶ້ນມາ ຫຼື ເອີ້ນວ່າ **ສັນຍາ** ເພື່ອເປັນເຄື່ອງມືໃນການຈັດຕັ້ງ ແລະ ດໍາເນີນທຸລະກິດ.

# ບໍລິສັດຮຸ້ນສ່ວນ (Partnership)

- *ບໍລິສັດຮຸ້ນສ່ວນ (Partnership) ຄວນລະບຸຂໍ້ມູນດັ່ງຕໍ່ໄປນີ້:*
  1. ວັນທີ່ຂອງການສ້າງຕັ້ງບໍລິສັດຮຸ້ນສ່ວນ
  2. ຊື່ບໍລິສັດ
  3. ຊື່ ແລະ ນາມສະກຸນ ພ້ອມທີ່ຢູ່ລະອຽດຂອງຂາຮຸ້ນ
  4. ລັກສະນະ ແລະ ຂອບເຂດຂອງການດຳເນີນທຸລະກິດຂອງບໍລິສັດ
  5. ສຳນັກງານ ຫຼື ສະຖານທີ່ຕັ້ງຂອງບໍລິສັດ
  6. ອາຍຸການຂອງບໍລິສັດ

7. ການປະກອບສ່ວນຂອງແຕ່ລະຂາຮຸ້ນດ້ານທຶນ ແລະ ອື່ນໆ

8. ການແບ່ງປັນຜົນກຳໄລ ແລະ ຂາດທຶນ

9. ການຖອນເງິນ ແລະ ເງິນເດືອນຂອງແຕ່ລະຂາຮຸ້ນ

10. ການປະກອບສ່ວນດ້ານເວລາຂອງຂາຮຸ້ນແຕ່ລະຄົນຕໍ່ວຽກງານ.

11. ສາຍພົວພັນດ້ານສິດອຳນາດຂອງຂາຮຸ້ນດ້ວຍກັນ

12. ຂອບເຂດສິດຂອງຂາຮຸ້ນ ຕໍ່ບັນຊີ ແລະ ບັນທຶກການເງິນຂອງວິສາຫະກິດ

13. ລະບຽບການ ແລະ ວິທີການຖອນເງິນຂອງຂາຮຸ້ນແຕ່ລະຄົນ

14. ການແບ່ງຊັບສິນ ແລະ ຊື່ບໍລິສັດໃນກໍລະນີຍຸບເລີກ

15. ຂໍ້ກຳນົດສຳລັບການໄກ່ເກ່ຍຂໍ້ຂັດແຍ່ງທີ່ອາດເກີດຂຶ້ນ

ປະເພດຂອງຂາຮຸ້ນ (Types of partners) ຂາຮຸ້ນມີສອງປະເພດພື້ນຖານດັ່ງນີ້: ຂາຮຸ້ນສາມັນ ແລະ ຂາຮຸ້ນຈໍາກັດ (ຫຼືເອີ້ນວ່າພິເສດ).

# ຂາຮຸ້ນສາມັນ

- ຂາຮຸ້ນຈຳນວນຂາຮຸ້ນສາມັນໃນບໍລິສັດ ຮຸ້ນສ່ວນອາດບໍ່ຈຳກັດແຕ່ປົກກະຕິແມ່ນຮຽກຮ້ອງໃຫ້ມີຕໍ່າສຸດຫນຶ່ງຄົນ. ຂາຮຸ້ນສາມັນມີຫນີ້ສິນບໍ່ຈຳກັດ. ບຸກຄົນດັ່ງກ່າວອາດຮັບຜິດຊອບບໍ່ພຽງແຕ່ຂອບເຂດຂອງການລົງທຶນທາງດ້ານທຸລະກິດ, ແຕ່ຍັງຮັບຜິດຊອບຕໍ່ຊັບສິນອື່ນໆ ທີ່ຕົນເປັນກຳມະສິດຢູ່. **ຂາຮຸ້ນສາມັນ ຕ້ອງມີສ່ວນຮ່ວມອັນຕັ້ງຫນ້າໃດຫນຶ່ງ ໃນການດຳເນີນທຸລະກິດ.**

# ຂາຮຸ້ນຈຳກັດ

- ກົດໝາຍອາດບໍ່ໄດ້ກຳນົດວ່າ ຂາຮຸ້ນຈຳກັດຕ້ອງມີຈຳນວນຈັກຄົນ ແຕ່ໂດຍທົ່ວໄປແລ້ວກໍ່ບໍ່ໄດ້ຈຳກັດ. ຄວາມແຕກຕ່າງເບື້ອງຕົ້ນ ລະຫ່ວາງຂາຮຸ້ນສາມັນ ແລະ ຂາຮຸ້ນຈຳກັດ ແມ່ນຢູ່ບ່ອນວ່າຂາຮຸ້ນຈຳກັດມີຫນີ້ສິນຈຳກັດ. ຂາຮຸ້ນຈຳກັດອາດສູນເສຍສະເພາະສິ່ງທີ່ໄດ້ລົງທຶນໃນບໍລິສັດຮຸ້ນສ່ວນເທົ່ານັ້ນ, ສ່ວນໜີ້ສິນອື່ນໆ. ເປັນຕົ້ນຊັບສິນຕ່າງໆ ຂອງ ຂາຮຸ້ນຈຳກັດ ແມ່ນບໍ່ສາມາດຖືກຍຶດ ເມື່ອເກີດກໍລະນີ ທີ່ຕ້ອງທົດແທນຫນີ້ສິນຂອງບໍລິສັດຮຸ້ນສ່ວນ.

# ຂໍ້ດີຂອງບໍລິສັດຮຸ້ນສ່ວນ (Advantages of the partnership form)

1) ການສ້າງຕັ້ງບໍລິສັດຮຸ້ນສ່ວນ ເປັນຮູບແບບກຳມະສິດ ເຫັນວ່າງ່າຍດາຍ ແລະ ສິ້ນເປືອງນ້ອຍ.
2) ຜົນກຳໄລສາມາດແບ່ງປັນໄດ້ທຸກຮູບແບບ ຕາມທີ່ໄດ້ຕົກລົງລະຫວ່າງຂາຮຸ້ນນຳກັນ. ບາງເທື່ອເພີ່ນອາດ ສາມາດນຳໃຊ້ສູດຂອງການແບ່ງປັນຜົນກຳໄລ ທີ່ອີງຕາມທຶນຮອນທີ່ປະກອບສ່ວນໃນທຸລະກິດ ຫຼື ອີງຕາມເວລາທີ່ໄດ້ໃຊ້ເຂົ້າໃນການດຳເນີນທຸລະກິດ.
3) ຄວາມສາມາດຊອກຫາແຫຼ່ງທຶນ ມັກຈະສະດວກກວ່າ ໃນຮູບແບບການເປັນເຈົ້າຂອງຜູ້ດຽວ.
4) ສາມາດສ້າງສາຍພົວພັນດ້ານສິດອຳນາດ ໄດ້ໃນທຸກຮູບແບບ.
5) ຂາຮຸ້ນຈະເສຍພາສີ ເຫມືອນກັບນິຕິບຸກຄົນ ຊຶ່ງບໍ່ມີການເສຍຊ້ອນ.

# ຂໍ້ເສຍຂອງບໍລິສັດຮຸ້ນສ່ວນ (Disadvantages of the partnership form)

1) ສາມາດກາຍເປັນບ່ອນຂັດແຍ້ງທາງດ້ານສິດອຳນາດ.
2) ການຖອນຕົວ ຫຼື ການເສຍຊີວິດ ຂອງຂາຮຸ້ນສາມັນຜູ້ໃດຫນຶ່ງ ອາດເຮັດໃຫ້ເກີດບັນຫາຂຶ້ນໄດ້ ໃນການສືບຕໍ່ ເນີນທຸລະກິດ ຫາກຂາຮຸ້ນທີ່ເຫຼືອຢູ່ນັ້ນ ຂາດຄວາມສາມາດ ຫຼື ຂາດທຶນເພື່ອຊື້ໂອນຊັບສິນຂອງຂາຮຸ້ນຜູ້ທີ່ຖອນຕົວ ຫຼື ເສຍຊີວິດໄປແລ້ວ.
3) ມີການແບ່ງກຳໄລຈາກທຸລະກິດ ໃຫ້ຫຼາຍຄົນ

**ຕົວຢ່າງ: ຂອງລະບຽບຂໍ້ບັງຄັບຂອງບໍລິສັດຮຸ້ນສ່ວນ**

**ສັນຍາ**

ສັນຍາສ້າງຕັ້ງບໍລິສັດຮຸ້ນສ່ວນສະບັບນີ້ ມີຜົນສັກສິດຕັ້ງແຕ່ ວັນທີ_____ເດືອນ_____ປີ_____ລະຫວ່າງບຸກຄົນ ຊຶ່ງມີຊື່ ແລະ ທີ່ຢູ່ດັ່ງລຸ່ມນີ້:

1. ທ້າວ A (ບ້ານ______, ຄຸ້ມ______ ໜ່ວຍ______ ເມືອງ______ ກຳແພງນະຄອນວຽງຈັນ)
2. ທ້າວ B (ບ້ານ______, ຄຸ້ມ______ ໜ່ວຍ______ ເມືອງ______ ກຳແພງນະຄອນວຽງຈັນ)

ຂາຮຸ້ນທີ່ມີຊື່ຂ້າງເທິງນີ້ ໄດ້ເຫັນພ້ອມນຳກັນສ້າງຕັ້ງບໍລິສັດຮຸ້ນສ່ວນຂຶ້ນ ໂດຍມີເປົ້າໝາຍ, ອາຍຸການ ແລະ ເງື່ອນໄຂ ຕ່າງໆ ດັ່ງລຸ່ມນີ້:

1. ຊື່ບໍລິສັດ: ບໍລິສັດມີຊື່ວ່າ ບໍລິສັດ ABD.
2. ສຳນັກງານຂອງບໍລິສັດ: ສຳນັກງານແມ່ນ ເລກທີ______, ຖະໜົນ______, ເມືອງ______ກຳແພງນະຄອນວຽງຈັນ ສ ປ ປ ລາວ.
3. ເປົ້າໝາຍ: ທຸກໆ ກິດຈະການຂອງທຸລະກິດຂອງບໍລິສັດຮຸ້ນສ່ວນແມ່ນ: ນຳເຂົ້າ-ສົ່ງອອກສິນຄ້າການກະເສດ.
4. ອາຍຸການ: ບໍລິສັດຮຸ້ນສ່ວນຈະເລີ່ມກິດຈະການຕັ້ງແຕ່ວັນທີ ______ແລະ ຈະດຳເນີນສືບຕໍ່ຈົນຮອດວັນທີ______
5. ການປະກອບສ່ວນດ້ານທຶນຮອນ ແລະການແບ່ງປັນຜົນກຳໄລແລະຂາດທຶນ: ການປະກອບສ່ວນຂອງ ທ່ານ ແມ່ນ ດ້ານການບໍລິຫານ ແລະດຳເນີນກິດຈະການທາງດ້ານທຸລະກິດ, ທຶນສ່ວນໃຫຍ່ ແມ່ນທ່ານ B ເປັນຜູ້ປະກອບ ສ່ວນ ໂດຍຕົກລົງຍິນດີສະໜອງທຶນອັນຈຳເປັນ ທັງຈາກເລີ່ມຕົ້ນຂຶ້ນແລ້ວ ເພື່ອຊົດເຊີຍການຂາດທຶນຕ່າງ ໆ ຂອງ ບໍລິສັດຮຸ້ນສ່ວນ. ດັ່ງນັ້ນທ່ານ B ຈະເປັນຜູ້ຮັບຜິດຊອບ ຕໍ່ການຂາດທຶນຕ່າງ ໆ ທີ່ເກີດຂຶ້ນ ຈາກບໍລິສັດຮຸ້ນສ່ວນ ຍ້ອນການປະກອບສ່ວນຢ່າງຫຼວງຫຼາຍ ທາງດ້ານໜ້າທີ່ບໍລິຫານ ຂອງທ່ານ A, ບໍລິສັດຮຸ້ນສ່ວນຈຶ່ງເຫັນດີແບ່ງປັນ ໃນອັດຕາ 2/3 (ສອງສ່ວນສາມ) ຂອງຜົນກຳໄລທຸກຢ່າງ ໃຫ້ແກ່ທ່ານ A. ການແບ່ງຜົນກຳໄລແລະຂາດທຶນ ຕ້ອງ ປະຕິບັດໃນເວລາທີ່ເຫັນສົມຄວນ ຕາມການຕົກລົງຂອງຂາຮຸ້ນນຳກັນ ແລະ ຢູ່ໃນທ້າຍປີງົບປະມານ, ຜົນກຳ ໄລ ແລະຂາດທຶນຂອງບໍລິສັດຮຸ້ນສ່ວນ ຕ້ອງໄດ້ຖືກແບ່ງປັນລະຫວ່າງບໍລິສັດຮຸ້ນສ່ວນນຳກັນ ຕາມຕາລາງເວລາຂອງ ການແບ່ງປັນຜົນກຳໄລແລະຂາດທຶນ ທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ.
6. ການກວດກາ: ຂາຮຸ້ນມີສິດກວດກາ ຕໍ່ທຸລະກິດຂອງບໍລິສັດຮຸ້ນສ່ວນ ແລະແຕ່ລະຂາຮຸ້ນມີສິດເທົ່າທຽມກັນໃນ ການບໍລິຫານ ແລະດຳເນີນງານທຸລະກິດຂອງບໍລິສັດຮຸ້ນສ່ວນ. ທຸກໆວຽກງານທຸລະກິດຂອງບໍລິສັດ ຮຸ້ນສ່ວນ ທີ່ບໍ່ທັນເອກະພາບນຳກັນ ຕ້ອງໄດ້ຖືກຕັດສິນໂດຍຈຳ ນວນສຽງສ່ວນຫຼາຍຂອງຂາຮຸ້ນນຳ ກັນ. ທຸກໆການກະທຳ ທີ່ ນອກເໜືອລະບຽບຂໍ້ບັງຄັບຂອງບໍລິສັດຮຸ້ນສ່ວນ ຫຼືທຸກສັນຍາຈ້າງທີ່ສາມາດສ້າງໜີ້ສິນໃຫ້ແກ່ບໍລິສັດຮຸ້ນສ່ວນ 50.000 ກີບ ຂຶ້ນໄປຄວນໄດ້ຮັບການເຫັນດີເຫັນພ້ອມຈາກຂາຮຸ້ນທຸກຄົນ ເປັນລາຍລັກອັກສອນເສຍກ່ອນ.
7. ການຍຸບເລີກ: ໃນກໍລະນີອອກກິນເບັ້ຍບຳນານ, ລົ້ມລະລາຍ, ເສຍຊີວິດ, ຫຼື ເສຍສະພາບທາງຈິດ ຂອງ ຂາຮຸ້ນ ຄົນໃດໜຶ່ງ, ຂາຮຸ້ນອື່ນ ໆ ມີສິດດຳ ເນີນສືບຕໍ່ ທຸລະກິດຂອງບໍລິສັດຮຸ້ນສ່ວນ ພາຍໃຕ້ຊື່ບໍລິສັດອັນເກົ່າ ຫຼືສືບຕໍ່ທຸລະ ກິດ ໂດຍສົມທົບກັບບຸກຄົນອື່ນໃດໜຶ່ງ ທີ່ເຫັນວ່າເໝາະສົມ.

ໂດຍຊ້ອງໜ້າສັກຂີພິຍານ, ຂາຮຸ້ນໄດ້ຕົກລົງເຊັນສັນຍາບໍລິສັດຮຸ້ນສ່ວນສະບັບນີ້ ໃນວັນທີທີ່ໄດ້ລະບຸໄວ້ຂ້າງເທິງ.

ຂາຮຸ້ນ 1:____________________________

ຂາຮຸ້ນ 2: ____________________________

ຕົວຢ່າງ: ຂອງລະບຽບຂໍ້ບັງຄັບຂອງບໍລິສັດຮຸ້ນສ່ວນ

# ບໍລິສັດຈຳກັດ (Corporation)

## 1. ບໍລິສັດຈຳກັດ:

- ບໍລິສັດຈຳກັດ ແມ່ນຮູບແບບບໍລິສັດຫນຶ່ງ ຊຶ່ງສ້າງຕັ້ງຂຶ້ນດ້ວຍຮູບການແບ່ງທຶນເປັນຮຸ້ນ ແຕ່ລະຮຸ້ນ ມີມູນຄ່າເທົ່າກັນ ໂດຍມີຜູ້ຖືຮຸ້ນ ໃນການລິເລີ່ມສ້າງຕັ້ງບໍລິສັດ ແຕ່ສອງຄົນຂຶ້ນໄປ. ຜູ້ຖືຮຸ້ນຂອງບໍລິສັດຈຳກັດ ມີຈຳນວນທັງຫມົດບໍ່ ເກີນ 20 ຄົນ. ຊຶ່ງມີຄວາມຮັບຜິດຊອບຕໍ່ຫນີ້ສິນບໍລິສັດບໍ່ເກີນມູນຄ່າຮຸ້ນທີ່ຕົນຍັງບໍ່ທັນຖອກເຕັມເທົ່ານັ້ນ, ຜູ້ຖືຮຸ້ນບໍ່ຈຳເປັນຕ້ອງມີຖານະເປັນນັກທຸລະກິດ.
- ການຄຸ້ມຄອງບໍລິສັດຈຳກັດ ແມ່ນດຳເນີນໂດຍຜູ້ຈັດການຜູ້ຫນຶ່ງ ຫຼື ຫຼາຍຄົນ, ຊຶ່ງຖືກແຕ່ງຕັ້ງໂດຍກອງປະຊຸມຜູ້ຖືຮຸ້ນ ຫຼື ຕາມລະບຽບຂອງບໍລິສັດ. ຜູ້ຈັດການອາດຖືກຄັດເລືອກເອົາຈາກບັນດາຜູ້ຖືຮຸ້ນ ຫຼື ບຸກຄົນພາຍນອກກໍ່ໄດ້. ອາຍຸການ ຂອງຜູ້ຈັດການ ແມ່ນກຳນົດຕາມຂໍ້ຕົກລົງ ຂອງກອງປະຊຸມຜູ້ຖືຮຸ້ນ ໃນເວລາສ້າງຕັ້ງບໍລິສັດ ຫຼືໃນເວລາເນີນງານ ຂອງບໍລິສັດ.

# ບໍລິສັດຈຳກັດ (Corporation)

## 2. ບໍລິສັດມະຫາຊົນ:

- ບໍລິສັດມະຫາຊົນ ແມ່ນຮູບແບບບໍລິສັດຫນຶ່ງ. ຊຶ່ງສ້າງຕັ້ງຂຶ້ນດ້ວຍຮູບການແບ່ງທຶນເປັນຮຸ້ນ ແຕ່ລະຮຸ້ນມີມູນຄ່າເທົ່າກັນ ແລະ ມີຜູ້ຖືຮຸ້ນລິເລີ້ມສ້າງຕັ້ງບໍລິສັດແຕ່ເຈັດຄົນຂຶ້ນໄປ, ຊຶ່ງມີຄວາມຮັບຜິດຊອບຕໍ່ຫນີ້ສິນບໍລິສັດ ບໍ່ເກີນມູນຄ່າ ຮຸ້ນທີ່ຕົນຍັງບໍ່ທັນຖອກເຕັມເທົ່ານັ້ນ. ຜູ້ຖືຮຸ້ນບໍ່ຈຳເປັນຕ້ອງມີຖານະເປັນນັກທຸລະກິດ.
- ທຶນຂອງບໍລິສັດມະຫາຊົນ ນອກຈາກໄດ້ມາຈາກການປະກອບທຶນ ຂອງຜູ້ຖືຮຸ້ນແລ້ວ ຍັງສາມາດລະດົມທຶນ ຈາກພາຍນອກຢ່າງເປີດເຜີຍ ແລະ ຈາກການຈຳຫນ່າຍໃບຮຸ້ນກູ້ໄດ້.
- ບໍລິສັດມະຫາຊົນ ຈະມີສະພາບໍລິຫານ ດຳເນີນງານ ຊຶ່ງປະກອບດ້ວຍສະມາຊິກແຕ່ຫ້າຫາສິບເອັດຄົນ. ສະພາບໍລິຫານສາມາດເລືອກຕັ້ງເອົາບຸກຄົນຜູ້ໃດຜູ້ຫນຶ່ງມາເປັນຜູ້ອຳນວຍການຕາມຄຳສະເໜີຂອງປະທານສະພາບໍລິຫານ.

# ການສ້າງຕັ້ງ ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ຈະຕ້ອງມີສັນຍາ ກ່ຽວກັບສິ່ງຕ່າງໆດັ່ງຕໍ່ໄປນີ້:

- ຊື່ຂອງບໍລິສັດ (ໂດຍມີຄຳວ່າ ບໍລິສັດຈຳກັດ ຫຼື ບໍລິສັດມະຫາຊົນ)
- ທຶນຈົດທະບຽນ
- ໄລຍະເວລາຂອງການດຳເນີນບໍລິສັດ (ສ່ວນຫລາຍແມ່ນຕະຫຼອດການ)
- ເປົ້າຫມາຍຂອງບໍລິສັດ
- ຈຳນວນຮຸ້ນທີ່ບໍລິສັດສະເຫນີອອກ ແລະ ມູນຄ່າຮຸ້ນ
- ສຳນັກງານຂອງບໍລິສັດ
- ຊື່ ແລະ ບ່ອນຢູ່ຂອງຜູ້ຖືຮຸ້ນຕ່າງໆ
- ຊື່ແລະບ່ອນຢູ່ຂອງກຳມະການສະພາບໍລິຫານ.

**ບໍລິສັດຈຳກັດ ຫຼື ບໍລິສັດມະຫາຊົນ ຕ້ອງມີກົດລະບຽບພາຍໃນຂອງຕົນ ຊຶ່ງຈະກຳນົດຂໍ້ມູນດັ່ງລຸ່ມນີ້:**

*1) ກອງປະຊຸມລະຫວ່າງຜູ້ຖືຮຸ້ນ*

- ສະຖານທີ່ ແລະ ເວລາ
- ວິທີຮຽກໂຮມ ແລະ ນຳພາກອງປະຊຸມສະໄຫມວິສາມັນ
- ວິທີຈັດລາຍຊື່ຜູ້ທີ່ມີສິດອອກສຽງ
- ກຳນົດຈຳນວນຜູ້ຖືຮຸ້ນທີ່ຕ່ຳສຸດ ເພື່ອສາມາດໄຂກອງປະຊຸມໄດ້
- ການລົງຄະແນນສຽງຂອງຜູ້ຖືຮຸ້ນຕ່າງໆ

## ບໍລິສັດຈຳກັດ ຫຼື ບໍລິສັດມະຫາຊົນ ຕ້ອງມີກົດລະບຽບພາຍໃນຂອງຕົນ ຊຶ່ງຈະກຳນົດຂໍ້ມູນດັ່ງລຸ່ມນີ້:

*2) ສະພາບໍລິຫານ (ຄະນະອຳນວຍການ)*

- ສະຖານທີ່ ແລະ ເວລາ
- ວິທີຮຽກໂຮມ ແລະ ນຳພາກອງປະຊຸມສະໄຫມວິສາມັນ
- ວິທີຈັດລາຍຊື່ຜູ້ທີ່ມີສິດອອກສຽງ
- ກຳນົດຈຳນວນຜູ້ຖືຮຸ້ນທີ່ຕ່ຳສຸດ ເພື່ອສາມາດໄຂກອງປະຊຸມໄດ້
- ການລົງຄະແນນສຽງຂອງຜູ້ຖືຮຸ້ນຕ່າງໆ

**ບໍລິສັດຈຳກັດ ຫຼື ບໍລິສັດມະຫາຊົນ ຕ້ອງມີກົດລະບຽບພາຍໃນຂອງຕົນ ຊຶ່ງຈະກຳນົດຂໍ້ມູນດັ່ງລຸ່ມນີ້:**

*3) ສັນຍາ, ການກູ້ຢືມ, ໃບເຊັກ ແລະ ເງິນຝາກ*

- ສະຖານທີ່ ແລະ ເວລາ
- ວິທີຮຽກໂຮມ ແລະ ນຳພາກອງປະຊຸມສະໄຫມວິສາມັນ
- ວິທີຈັດລາຍຊື່ຜູ້ທີ່ມີສິດອອກສຽງ
- ກຳນົດຈຳນວນຜູ້ຖືຮຸ້ນທີ່ຕ່ຳສຸດ ເພື່ອສາມາດໄຂກອງປະຊຸມໄດ້
- ການລົງຄະແນນສຽງຂອງຜູ້ຖືຮຸ້ນຕ່າງໆ

ບໍລິສັດຈຳກັດ ຫຼື ບໍລິສັດມະຫາຊົນ ຕ້ອງມີກົດລະບຽບພາຍໃນຂອງຕົນ ຊຶ່ງຈະກຳນົດຂໍ້ມູນດັ່ງລຸ່ມນີ້:

*4) ໃບຢັ້ງຢືນຮຸ້ນ ແລະ ການມອບໂອນ*
*5) ກຳນົດປີງົບປະມານ (ເວລາເລີ່ມ ແລະ ເວລາປິດ)*
*6) ເງິນປັນຜົນ (ການປະກາດ  ແລະ ການເບີກຈ່າຍ)*
*7) ກາຈ້ຳຂອງບໍລິສັດ*
*8) ການດັດແກ້ກົດລະບຽບພາຍໃນ*

# ຮຸ້ນ (Stock) ?

# ຮຸ້ນ (Stock)

ກຳມະສິດຢູ່ໃນບໍລິສັດມະຫາຊົນສາມາດມີ 2 ຮູບແບບພື້ນຖານ:

**ຮຸ້ນບູລິມະສິດ** ແລະ **ຮຸ້ນສາມັນ.**

*ຜູ້ຖືຮຸ້ນຈະໄດ້ຮັບສ່ວນແບ່ງໃນຮູບແບບເງິນປັນຜົນ, ໂດຍສະພາບໍລິຫານຂອງບໍລິສັດ ເປັນຜູ້ກຳນົດກ່ຽວກັບການເບີກຈ່າຍເງິນປັນຜົນ.*

# ໃບຮຸ້ນກູ້ (Bonds) ຫຼື ພັນທະບັດ

- **ແມ່ນໃບຢັ້ງຢືນໜີ້ໄລຍະຍາວຂອງບໍລິສັດ, ສາມາດອອກເປັນຍອດເງິນຕ່າງໆ** ເຊັ່ນ: ໃບຮຸ້ນກູ້ ໃບລະ 5 ລ້ານກີບ ຫຼື ໃບຮຸ້ນກູ້ໃບລະ 10 ລ້ານກີບ. ເຊິ່ງມີອາຍຸກຳນົດອັນແນ່ນອນ. ເມື່ອເຖິງເວລາບໍລິສັດຕ້ອງໄດ້ຈ່າຍຈຳນວນເງິນດັ່ງກ່າວ.

*ຕົວຢ່າງ: ໃບຮຸ້ນກູ້ມູນຄ່າ 5 ລ້ານກີບ (ມີດອກເບ້ຍ 10%). ເຈົ້າຂອງໃບຮຸ້ນກູ້ ຈະຮັບດອກເບ້ຍ 5 ແສນກີບ ຕໍ່ປີ, ລວມທັງຍອດເງິນ 5 ລ້ານກີບ ເມື່ອຮອດກຳນົດ.*

# Startup ແມ່ນຫຍັງ?

# Startup ແມ່ນຫຍັງ? (THEBIZHUB, 2023).

Startup ແມ່ນການເລີ່ມເຮັດທຸລະກິດໃໝ່ທີ່ມີຄົນໜ້ອຍ ດຽວກໍສາມາດເຮັດໄດ້ ໂດຍສ້າງທຸລະກິດທີ່ມີແນວໂນ້ມ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນຊີວິດປະຈໍາວັນ, ເຊິ່ງມັກ ຈະເລີ່ມເຫັນຊ່ອງທາງ ຫຼື ໂອກາດທີ່ຄົນອື່ນຍັງບໍ່ເຄີຍເຫັນ.

ທຸລະກິດ Start up ແມ່ນມີການເຕີບໂຕແບບກ້າວ ກະໂດດ ສາມາດສ້າງລາຍໄດ້ເປັນຈໍານວນຫຼາຍ ເຊິ່ງສ່ວນ ໃຫ່ຍແລ້ວມັກເປັນທຸລະກິດດ້ານໄອທີ, ຕົວຢ່າງ: Facebook ແລະ Google.

# ຂໍ້ດີຂອງທຸລະກິດ startup

1) ໄດ້ຮັບການສະໜັບສະໜູນນະໂຍບາຍຈາກລັດຖະບານ: ໄດ້ຮັບສິດທິປະໂຫຍດທາງພາສີ ແລະ ຄວາມຮູ້ໃນການປະກອບທຸລະກິດ.
2) ການສະໜັບສະໜູນສະພາບແວດລ້ອມອຸດສະຫະກຳ: ເຊັ່ນການວາງມາດຕະຖານ ແລະ ກົດເກນທີ່ຈຳເປັນ ແລະ ມີຄວາມປອດໄພ.
3) ການສະໜັບສະໜູນສະພາບແວດລ້ອມອຸດສະຫະກຳຈາກພາກເອກກະຊົນຈາກບໍລິສັດທີ່ມີຊື່ສຽງຢ່າງຫຼວງຫຼາຍ.
4) ບໍ່ຕ້ອງສ່ຽງລົງທຶນດ້ວຍຕົນເອງ ເພາະມັກຈະມີນັກລົງທຶນໃຫ້ການສະໜັບສະໜູນຢູ່ຕະຫຼອດ ແລະ ມີການເຕີບໂຕໄວ ເພາະມີຫຼາຍທຸລະກິດສະໜັບສະໜູນ.

# ຂໍ້ເສຍຂອງທຸລະກິດ Startup

1) ການລົງທຶນມີຄວາມສ່ຽງ ຈຶ່ງຕ້ອງມີການເຮັດການຕະຫຼາດເປັນຈຳນວນຫຼາຍ ເພື່ອເພີ່ມການສ້າງຄວາມຮັບຮູ້ ແລະ ຈຳນວນຜູ້ໃຊ້ຢ່າງຊັດເຈນ.
2) ລູກຄ້າ ຫຼື ຜູ້ບໍລິໂພກມີການປ່ຽນແປງໄປໄວ ແລະ ນະວັດຕະກຳອາດຈະຍັງບໍ່ທັນຕອບໂຈດ
3) ບໍ່ມີຊັບສິນຖາວອນ ຖ້າບໍ່ປະສົບຜົນສຳເລັດກໍບໍ່ສາມາດນຳຊັບສິນອື່ນໆ ໄປຂາຍຕໍ່ຍອດໄດ້ຄືກັບ ທຸລະກິດ SME ຫຼື ສາມາດເອີ້ນໄດ້ວ່າ ບໍ່ມີມູນຄ່າທາງທຸລະກິດ.

***ອີງຕາມບົດຄວາມຂອງ The BIZ HUB ໄດ້ຮວບຮວມ 5 ຈຸດທີ່ແຕກຕ່າງກັນລະຫ່ວາງ SME ແລະ Startup ດັ່ງນີ້:***

## ຈຸດທີ 1 : ການເລີ່ມຕົ້ນເຮັດທຸລະກິດ

- Startup: ເປັນທຸລະກິດທີ່ເລີ່ມຕົ້ນຈາກແນວຄິດ ແລະ ໄອເດຍໃໝ່ໆ ເພື່ອຕອບສະໜອງຄວາມຕ້ອງການ ຫຼື ແກ້ໄຂບັນຫາ ( Pain Point ) ໃນສັງຄົມເຮົາ.
- SME: ເປັນທຸລະກິດຂະໜາດນ້ອຍທີ່ເລີ່ມຕົ້ນທຸລະກິດທີ່ເປັນຮູບປະທຳ (ສິ່ງທີ່ຈັບຕ້ອງໄດ້) ຫຼາຍກ່ວາ Startup, ເນື່ອງຈາກຈະເປັນການໃຫ້ບໍລິການ ຫຼື ຂາຍສິນຄ້າທີ່ສ່ວນໃຫ່ຍຈັບຕ້ອງໄດ້ໃຊ້ງານທົ່ວໄປ.

# ຈຸດທີ 2: ການເຕີບໂຕຂອງທຸລະກິດ

- Startup: ການເຕີບໂຕຂອງທຸລະກິດລັກສະນະນີ້ແມ່ນການຈັດການລະບົບທຸລະກິດທີ່ສາມາດເຮັດໃຫ້ເຕີບໂຕໄດ້ເລື້ອຍໆ ແລະ ກ້າວກະໂດດຕໍ່ໄປໄດ້ເອງ ໂດຍບໍ່ຕ້ອງຂະຫຍາຍທຸລະກິດ ຫຼື ລົງທຶນໃໝ່.
- SME: ຈະເປັນການເຕີບໂຕແບບຄົງທີ່ໂດຍແນວໂນ້ມໃນການເຕີບໂຕມັກຈະເປັນໄປຕາມການຂະຫຍາຍທຸລະກິດ ເພີ່ມສາຂາ ເພີ່ມຈຳນວນບຸກຄະລາກອນ ເພີ່ມກຳລັງການຜະລິດໃຫ້ຫຼາຍຂຶ້ນ, ເຊິ່ງໝາຍຄວາມວ່າທຸລະກິດຈະເຕີບໂຕຕາມຄວາມນິຍົມຈາກຜູ້ຊື້ ຫຼື ຜູ້ໃຊ້ສິນຄ້າ ແລະ ການບໍລິການ ໂດຍດັດຊະນີວັດຈາກການເຕີບໂຕຂອງທຸລະກິດ SME ແມ່ນລາຍໄດ້ ແລະ ຜົນກຳໄລ.

# ຈຸດທີ 3: ແນວຄິດໃນການເຮັດທຸລະກິດ

- Startup: ແນວຄິດນີ້ສ່ວນໃຫ່ຍແມ່ນ ຈະເລີ່ມຕົ້ນມາຈາກການແກ້ໄຂບັນຫາບາງຢ່າງທີ່ເກີດຂຶ້ນໃນສັງຄົມທີ່ກຳລັງປະສົບກັບບັນຫາຢູ່ໃນຕອນນີ້ ຫຼື ການຫາໂອກາດຈາກຊ່ອງວາງທາງທຸລະກິດທີ່ມີຢູ່ເພື່ອໃຫ້ກາຍເປັນການບໍລິການທີ່ສາມາດແກ້ບັນຫານັ້ນໄດ້ ໂດຍທີ່ບໍ່ຈຳເປັນຕ້ອງອອກມາໃນຮູບແບບທີ່ເປັນສິ່ງຂອງທີ່ຈັບຕ້ອງໄດ້ເຊັ່ນ: *ແອບພິເຄຊັ່ນຕ່າງໆໃນໂທລະສັບ ເປັນລະບົບທີ່ຈັດເກັບໄວ້ຢູ່ໃນບໍລິການຕ່າງໆ* ເປັນຕົ້ນ.
- SME : ແນວຄິດນີ້ສ່ວນໃຫ່ຍແມ່ນການຫາລາຍໄດ້ຈາກສິນຄ້າ ຫຼື ການບໍລິການທີ່ມີຢູ່, ຖ້າວ່າສິນຄ້າແລະ ການບໍລິການໄດ້ຮັບຄວາມນິຍົມຫຼາຍເທົ່າໃດກໍຍິ່ງມີໂອກາດສ້າງລາຍໄດ້ຫຼາຍຂຶ້ນອີກດ້ວຍ.

# ຈຸດທີ 4: ເງິນທຶນທີ່ໃຊ້ໃນການສ້າງ ແລະ ໝູນວຽນໃນທຸລະກິດ

- Startup: ຈຸດເດັ່ນຂອງທຸລະກິດນີ້ມີຄື ແຫຼ່ງເງິນທຶນແມ່ນໄດ້ມາຈາກການລະດົມເງິນທຶນ ຈາກ ບຸກຄົນ ຫຼື ບໍລິສັດທີ່ສົນໃຈໃນໄອເດຍທຸລະກິດໃໝ່ໆ
- SME: ເງິນທຶນເລີ່ມຕົ້ນທຸລະກິດ SME ມັກຈະມີແຫຼ່ງທີ່ມາບໍ່ວ່າຈະເປັນ ສິນເຊື່ອ, ການກູ້ເງິນຈາກ ສະຖາບັນການເງິນ ຫຼື ເປັນເງິນລົງທຶນຈາກເງິນສ່ວນຕົວ , ຮຸ້ນສ່ວນ ເພື່ອນຳໄປຕໍ່ຍອດທຸລະກິດແລ້ວ ຈຶ່ງມາແບ່ງຜົນປະໂຫຍດໃຫ້ກັບຮຸ້ນສ່ວນທີ່ຮ່ວມລົງທຶນນຳ.

# ຈຸດທີ 5: ການນຳໃຊ້ເຕັກໂນໂລຊີໃນການດຳເນີນທຸລະກິດ

- Startup: ໃຊ້ເຕັກໂນໂລຊີໃໝ່ໆ ເປັນສ່ວນສຳຄັນໃນການດຳເນີນທຸລະກິດໃນການຕອບສະໜອງແນວຄິດໃນການແກ້ບັນຫາຕ່າງໆ ຫຼື ຄວາມຕ້ອງການຂອງຜູ້ຄົນໃຫ້ເກີດຂຶ້ນໄດ້ຢ່າງແທ້ຈິງ ເຊັ່ນ ເຕັກໂນໂລຊີ IoT ( Internet of Things ), AI, Machine Learning ເປັນຕົ້ນ.
- SME: ເຖິງແມ່ນວ່າ SME ຈະໃຊ້ເຕັກໂນໂລຊີເຂົ້າຊ່ວຍ ແຕ່ກຸ່ມ SME ຈະໃຊ້ເຕັກໂນໂລຊີເປັນພຽງສ່ວນໜຶ່ງເທົ່ານັ້ນ ບໍ່ແມ່ນຈຸດຂາຍເຊັ່ນ: ການນຳໃຊ້ເຕັກໂນໂລຊີມາຊ່ວຍຈັດລະບົບຈອງຄິວໃຫ້ລູກຄ້າເພື່ອໃຫ້ມີຄວາມສະດວກຂຶ້ນ ແລະ ໃຊ້ໃນການປະຊາສຳພັນໃຫ້ລູກຄ້າເຂົ້າເຖິງສິນຄ້າ ຫຼື ການບໍລິການຂອງເຮົາໄດ້ງ່າຍ ເພື່ອເຮັດໃຫ້ສິນຄ້າມີຄຸນນະພາບ ແລະ ວ່ອງໄວຫຼາຍຂຶ້ນ.

# ວຽກບ້ານ/Home work

1) ຕົວຢ່າງ ບົດບາດຂອງທຸລະກິດຂະໜາດໜ້ອຍ ຕໍ່ເສດຖະກິດຂອງປະເທດໃດໜຶ່ງ?
2) ຈຸດພິເສດຂອງທຸລະກິດຂະໜາດໜ້ອຍປະກອບມີຫຍັງແດ່?
3) ຮູບແບບຂອງທຸລະກິດປະກອບມີຫຍັງແດ່?
4) ຈົ່ງອະທິບາຍຂໍ້ດີ, ຂໍ້ເສຍຂອງ ຮູບແບບທຸລະກິດ ເຈົ້າຂອງຜູ້ດຽວ, ບໍລິສັດຮຸ້ນສ່ວນແລະ ບໍລິສັດຈຳກັດ?
5) ການສ້າງຕັ້ງ ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ຈະຕ້ອງມີສັນຍາຫຍັງແດ່?
6) Startup ແມ່ນຫຍັງ? ມີຄວາມແຕກຕ່າງກັບ SME ຄືແນວໃດ?

# Reference

THEBIZHUB. (2023, February 13). *What is the difference between Startup and SME*. Retrieved from www.thebizhub.la: https://www.thebizhub.la/blog-detail/651e6e6e47d8cfacb3263b98

Thongvanh, S.(2007). *Small Business Management.* published by the Faculty of Economics and Business Management, National University.

Rowinski, M. (2024, March 9). *How Small Businesses Drive The American Economy*. Retrieved from www.forbes.com: https://www.forbes.com/sites/forbesbusinesscouncil/2022/03/25/how-small-businesses-drive-the-american-economy/?sh=27c0aa284169

Oxfordbusinessgroup (2024, March 9). *Thailand's economic growth strategy focuses on small business*. Retrieved from oxfordbusinessgroup.com: https://oxfordbusinessgroup.com/reports/thailand/2017-report/economy/from-the-ground-up-small-business-is-the-heart-of-the-government-growth-strategy

ຂອບໃຈ

Thank you